City of Seattle

Democracy Voucher Program
P.O. Box 94729
Seattle, Washington 98124-4729

PRSRT STD
U.S. POSTAGE
PAID
SEATTLE WA
PERMIT 2052

ສະໝັກຂໍໃບເງິນບໍລິຈາກສົ່ງເສີມປະຊາທິປະໄຕມູນຄ່າ $100 ຂອງທ່ານມື້ນີ້!

Lao



ມີວິທີໃໝ່ໃນການມີສ່ວນຮ່ວມໃນການເລືອກຕັ້ງຂອງເມືອງຊີແອັດโທ!

ສະໝັກຂໍໃບເງິນບໍລິຈາກສົ່ງເສີມປະຊາທິປະໄຕມູນຄ່າ $100 ຂອງທ່ານມື້ນີ້!
www.seattle.gov/democracyvoucher

አማርኛ • Khmer • 繁體中文 • 简体中文 • Tagalog • 한국어 • ພາສາລາວ • Oromiffa • русский язык • af Soomaali • Español • ภาษาไทย • ትግርኛ • Tiếng Việt

ໃບເງິນບໍລິຈາກສົ່ງເສີມປະຊາທິປະໄຕສາມາດໃຊ້ເພື່ອສະໜັບສະໜູນຜູ້ສະໝັກທີ່ເຮັດວຽກໃຫ້ແກ່ສະພາເມືອງ ຫຼື ທະນາຍຄວາມເມືອງໃນການເລືອກຕັ້ງໃນເມືອງຊີແອັດโທປະຈຳປີ 2017.

1. ກວດເບິ່ງໃບເງິນບໍລິຈາກຂອງທ່ານໃນຕູ້ຈົດໝາຍຫຼັງຈາກວັນທີ 3 ມັງກອນ 2017.
2. ຊອກເບິ່ງລາຍຊື່ຜູ້ສະໝັກທີ່ມີຄຸນສົມບັດຄົບຖ້ວນໃນເວັບໄຊຂອງພວກເຮົາ ແລະ ມອບໃບເງິນບໍລິຈາກຂອງທ່ານໃຫ້.
3. ສົ່ງໃບເງິນບໍລິຈາກຂອງທ່ານຄືນຫາການໂຄສະນາຫາສຽງຂອງຜູ້ສະໝັກເລືອກຕັ້ງ ຫຼື ສົ່ງໃບເງິນບໍລິຈາກຂອງທ່ານທາງໄປສະນີຫາຄະນະກຳມະການຈັນຍາບັນ ແລະ ການເລືອກຕັ້ງຂອງເມືອງຊີແອັດโທ.
4. ຜູ້ສະໝັກຂອງທ່ານໄດ້ຮັບເງິນຈາກໃບເງິນບໍລິຈາກຂອງທ່ານ.
5. ຕິດຕາມເບິ່ງຜູ້ສະໝັກຂອງທ່ານຕະຫຼອດຂະບວນການເລືອກຕັ້ງ!

ຊອກເບິ່ງຜູ້ສະໝັກທີ່ມີຄຸນສົມບັດຄົບຖ້ວນໄດ້ທີ່:
www.seattle.gov/democracyvoucher

ຂ້ອຍຈະໄດ້ຮັບໃບເງິນບໍລິຈາກຂອງຂ້ອຍແນວໃດ?

ທ່ານມີເງື່ອນໄຂທີ່ຈະໄດ້ຮັບໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕມູນຄ່າ $100 ຖ້າທ່ານ:

- ເປັນຜູ້ຢູ່ອາໄສໃນເມືອງຊີແອັດ�โห.
- ມີອາຍຸຢ່າງໜ້ອຍ 18 ປີ, ແລະ
- ທັງ: ເປັນພົນລະເມືອງສະຫະລັດ, ສັນຊາດສະຫະລັດ, ຫຼື ເປັນຜູ້ຢູ່ອາໄສຖາວອນທີ່ຖືກຕ້ອງຕາມກົດໝາຍ ("ຜູ້ຖືບັດຂຽວ").

ຜູ້ມີສິດເລືອກຕັ້ງທີ່ລົງທະບຽນແລ້ວ ຈະໄດ້ຮັບໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕສີ່ໃບ ມູນຄ່າ $25ທາງຈົດໝາຍພາຍຫຼັງວັນທີ 3 ມັງກອນ 2017.

ທ່ານບໍ່ຈຳເປັນຕ້ອງເປັນຜູ້ມີສິດເລືອກຕັ້ງທີ່ລົງທະບຽນແລ້ວເພື່ອຮັບເອົາໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕ. ສະໝັກມື້ນີ້ໂດຍການເຂົ້າເບິ່ງເວັບໄຊທ!

www.seattle.gov/democracyvoucher

City of Seattle

ຄຳຖາມທີ່ມັກຖາມ

ໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕແມ່ນຫຍັງ?
ໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕແມ່ນໃບຢັ້ງຢືນທີ່ເປັນເຈ້ຍທີ່ທ່ານສາມາດໃຊ້ເພື່ອສະໜັບສະໜຸນການຫາສຽງຂອງຜູ້ສະໝັກສຳລັບຕຳແໜ່ງສະພາເມືອງ ແລະ ທະນາຍຄວາມເມືອງ. ຜູ້ຢູ່ອາໄສໃນເມືອງຊີແອັດ�โหທີ່ມີເງື່ອນໄຂຈະໄດ້ຮັບໃບເງິນບໍລິຈາກສີ່ໃບ, ແຕ່ລະໃບມີມູນຄ່າ $25. ໃນຖານະເປັນປະເພດທຳອິດໃນປະເທດ, �โครງການໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕມີຈຸດປະສົງເພີ່ມຈຳນວນຜູ້ຢູ່ອາໄສໃນເມືອງຊີແອັດ�โหຜູ້ທີ່ປະກອບສ່ວນເຂົ້າໃນການຫາສຽງຜູ້ສະໝັກ

�โครງການໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕໃຫ້ທຶນຫຼາຍປານໃດ?
ໃນປີ 2015, ຜູ້ມີສິດເລືອກຕັ້ງໃນເມືອງຊີແອັດ�โหທີ່ໄດ້ຮັບອະນຸມັດການລິເລີ່ມນຳພາພົນລະເມືອງ "ການເລືອກຕັ້ງທີ່ຊື່ສັດໃນເມືອງຊີແອັດ�โห" (I-122). ການລິເລີ່ມນີ້ອະນຸມັດໃຫ້ເພີ່ມພາສີຊັບສິນສູງສຸດ $3 ລ້ານຕໍ່ປີເພື່ອໃຫ້ທຶນແກ່�โครງການສຳລັບ 10 ປີຕໍ່ໄປ. �โครງການໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕໃຫ້ຄ່າໃຊ້ຈ່າຍແກ່ເຈົ້າຂອງບ້ານສະເລ່ຍປະມານ $11.50 ຕໍ່ປີ.

ບົດບາດຂອງຄະນະກຳມະການຈັນຍາບັນ ແລະ ການເລືອກຕັ້ງໃນເມືອງຊີແອັດ�โหແມ່ນຫຍັງ?
ຄະນະກຳມະການຈັນຍາບັນ ແລະ ການເລືອກຕັ້ງແມ່ນຄະນະກຳມະການເມືອງທີ່ເປັນກາງ, ເອກະລາດ ທີ່ບັງຄັບໃຊ້ຈັນຍາບັນ, ການເລືອກຕັ້ງ, ການໂນ້ມນາວ, ລະຫັດຜູ້ເປີດໂປງສຳລັບເມືອງຊີແອັດ�โห. ຕາມຜົນຈາກຜູ້ມີສິດເລືອກຕັ້ງທີ່ໄດ້ຮັບອະນຸມັດ I-122, ຄະນະກຳມະການຈະດູແລ ແລະ ກວດສອບ�โครງການໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕ.

ຈຸດປະສົງຂອງ�โครງການໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕແມ່ນຫຍັງ?
ໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕແມ່ນວິທີທາງໃໝ່ສຳລັບຜູ້ຢູ່ອາໄສໃນເມືອງຊີແອັດ�โห ເພື່ອມີສ່ວນຮ່ວມຫຼາຍຂຶ້ນໃນລັດຖະບານທ້ອງຖິ່ນຂອງເຂົາເຈົ້າ.

�โครງການໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕມີຈຸດປະສົງເພີ່ມຈຳນວນຜູ້ຢູ່ອາໄສໃນເມືອງຊີແອັດ�โหຜູ້ທີ່ປະກອບສ່ວນເຂົ້າໃນການຫາສຽງໃນທ້ອງຖິ່ນ.

ຂ້ອຍຈະໃຊ້ໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕຂອງຂ້ອຍແນວໃດ?
ທ່ານສາມາດໃຫ້ໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕຂອງທ່ານແກ່ຜູ້ສະໝັກທີ່ມີເງື່ອນໄຂ ຄົນທີ່ໜຶ່ງ ($25), ຄົນທີ່ສອງ ($50), ຄົນທີ່ສາມ ($75), ຫຼືທັງສີ່ຄົນ ($100). ໃບເງິນບໍລິຈາກຕ້ອງຖືກເຊັນຊື່, ລົງວັນທີ ແລະ ສະແດງຊື່ຜູ້ສະໝັກທີ່ເປັນລາຍລັກອັກສອນຢ່າງຈະແจ້ງໃນໃບເງິນບໍລິຈາກ. ອາດຈະມີການສົ່ງໃບເງິນບໍລິຈາກຄືນໃຫ້ກັບການຫາສຽງຂອງຜູ້ສະໝັກ ຫຼື ສົ່ງຄືນຫາຄະນະກຳມະການຈັນຍາບັນ ແລະ ການເລືອກຕັ້ງ�โดยກົງ.

ຂ້ອຍຈະໄດ້ຮັບໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕຂອງຂ້ອຍເມື່ອໃດ?
ທ່ານເປັນຜູ້ມີສິດເລືອກຕັ້ງທີ່ລົງທະບຽນແລ້ວບໍ?
ທ່ານຈະໄດ້ຮັບໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕໂດຍອັດຕະ�โນມັດທາງຈົດໝາຍພາຍຫຼັງວັນທີ 3 ມັງກອນ 2017.

ບໍ່ແມ່ນຜູ້ມີສິດເລືອກຕັ້ງທີ່ລົງທະບຽນແລ້ວບໍ? ທ່ານສາມາດຂໍຮັບເອົາໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕ
�โดยການເຂົ້າເບິ່ງwww.seattle.gov/democracyvoucher.ທ່ານຈະໄດ້ຮັບໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕຂອງທ່ານໃນໄວ້ໆນີ້ ພາຍຫຼັງມີການຢັ້ງຢືນໃບສະໝັກຂໍຂອງທ່ານແລ້ວ.

ຂ້ອຍບໍ່ຕ້ອງການໃຊ້ໃບເງິນບໍລິຈາກຂອງຂ້ອຍ. ຂ້ອຍຈະສາມາດໃຫ້ໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕຂອງຂ້ອຍແກ່ຄົນອື່ນໄດ້ບໍ?
ໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕທີ່ຖືກກຳນົດໃຫ້ທ່ານ ແລະ ສະເພາະທ່ານເທົ່ານັ້ນ. ໃບເງິນບໍລິຈາກບໍ່ສາມາດຂາຍ, ເປັນຂ້ອນ, ຫຼື ຊື້ໄດ້. ໃບເງິນບໍລິຈາກສິ່ງເສີມປະຊາທິປະໄຕບໍ່ມີມູນຄ່າເປັນເງິນສົດ ແລະ ບໍ່ແມ່ນຊັບສິນ.

www.seattle.gov/democracyvoucher **(206) 727-8855** **democracyvoucher@seattle.gov**

AM ከጃንዋሪ 2017 ጀምሮ፣ የሲያትል አዲሱ የዲሞክራሲ ቫውቸር ፕሮግራም ግብር በአካባቢ ምርጫዎች እርሰዎ እንዲሳተፉ ቀላል አድርጎታል፡፡ የበለጠ ለማወቅ እና ለማመልከት፤ይጎበኙ **www.seattle.gov/democracyvoucher/amharic**

KM ការចាប់ផ្តើមនៅខែមករា ឆ្នាំ 2017 កម្មវិធីប័ណ្ណប្រជាធិបតេយ្យថ្មីរបស់ទីក្រុងស៊ីថល Seattle ដែលធ្វើឱ្យវាមានភាពងាយស្រួលជាងមុនសម្រាប់លោកអ្នក ដើម្បីចូលរួមក្នុងការបោះឆ្នោតនៅមូលដ្ឋាន។ ដើម្បីស្វែងយល់បន្ថែមទៀត និងអនុវត្ត សូមចូលទៅដែបសាយ៖ **www.seattle.gov/democracyvoucher/khmer**

CH 自2017年1月起，西雅图的全新“民主代金券计划”让您能够更轻松地参加地方选举。欲了解更多信息，请访问：**www.seattle.gov/democracyvoucher/chinese-simplified**

CH 自2017年1月起，西雅圖的全新「民主代金券計劃」讓您能夠更輕鬆地參加地方選舉。欲瞭解更多資訊，請造訪：**www.seattle.gov/democracyvoucher/chinese-traditional**

TA Simula Enero 2017, magiging mas madali na para sa inyo ang makilahok sa mga lokal na halalan sa pamamagitan ng bagong Programa ng Seattle na Voucher ng Demokrasya (Democracy Voucher Program). Para sa karagdagang kaalaman at para magpalista, bisitahin ang **www.seattle.gov/democracyvoucher/tagalog**

KO 2017년 1월부터 시애틀의 새 민주주의 바우처 프로그램을 통해 귀하가 지역 선거에 더 쉽게 참가할 수 있게 됩니다. 더 자세히 알아보고 신청하려면 **www.seattle.gov/democracyvoucher/korean**를 방문하십시오.

LA ເລີ່ມແຕ່ເດືອນມັງກອນ 2017 ເປັນຕົ້ນໄປ, �โครງການໃໝ່ບໍລິຈາກເພື່ອປະຊາທິປະໄຕຂອງເມືອງຊີອາເຕີ້ລ ເຮັດໃຫ້ທ່ານເຂົ້າຮ່ວມໃນການເລືອກຕັ້ງຂອງທ້ອງຖິ່ນໄດ້ງ່າຍຂຶ້ນ. ເພື່ອຮຽນຮູ້ເພີ່ມເຕີມ ແລະ ນຳໃຊ້, ກະລຸນາເຂົ້າເບິ່ງ **www.seattle.gov/democracyvoucher/lao**

OM Jalqaba baatii Amajjii 2017tti, Sagantaan Nagahee Dimokraasii Siyaatil haarawaan akka filannorratti hirmaataniif isiinii mijesseera. Caalaa hubachuufi iyyachhuf **www.seattle.gov/democracyvoucher/oromo** doowadhaa.

RU Новая программа города Сиэттл «Ваучер демократа» облегчит ваше участие в местных выборах с января 2017 года. Чтобы узнать о программе больше и зарегистрироваться в ней, посетите сайт **www.seattle.gov/democracyvoucher/russian**

SO Bilowga jaanayo 2017, Barnaamijka Foojarka Dimuqraadiga cusub ee Seattle waxay kuu sahlaysaa inaad ka qayb qaadato doorashooyinka deegaanka. Si aad u barato wax badan iyo codisga, booqo **www.seattle.gov/democracyvoucher/somali**

ES A partir de enero de 2017, el nuevo Programa de Vales Democráticos le facilita la tarea de participar en las elecciones locales. Para conocer más y solicitudes, visite **www.seattle.gov/democracyvoucher/spanish**

TH เริ่มตั้งแต่มกราคม 2017
โครงการบัตรกำนัลเพื่อสนับสนุนระบอบประชาธิปไตยซึ่งเป็นโครงการใหม่ของเมืองซีแอตเทิลช่วยให้คุณสามารถเข้าร่วมในการเลือกตั้งท้องถิ่นได้ง่ายขึ้น เรียนรู้เพิ่มเติมและขอรับได้ที่ **www.seattle.gov/democracyvoucher/thai**

TI ካብ ጥሪ 2017 ጀሚሩ፣ ሓዲሽ ናይ ሲያትል ዲሞክራሲ ቫውቸር ፕሮግራም ኣብ ከባቢያዊ ምርጫታት ብቐሊሉ ክትሳተፍ የኽእለካ። ዝያዳ ሓበሬታ ንምፍላጥን ንምምልካትን፣ **www.seattle.gov/democracyvoucher/tigrigna** ተወከስ።

VI Bắt đầu từ tháng 1 năm 2017, thành phố Seattle cho phép bạn tham gia dễ dàng hơn vào các cuộc bầu cử địa phương qua chương trình Vé Phiếu Dân Chủ (Democracy Voucher). Để biết thêm chi tiết và đăng ký, bạn có thể truy cập qua trang mạng **www.seattle.gov/democracyvoucher/vietnamese**